ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

+++++++++

| | |
|---|---|
| ນະຄອນຫຼວງວຽງຈັນ | ເລກທີ 1167 ............../ຈມ.ຈລ |
| ເມືອງຈັນທະບູລີ | ວັນທີ 05 Jul 2016 |

# ຄຳສັ່ງ

ເຖິງ: ທ້າວ ວັນເຮືອງ ຂຸນທະວົງ ທີ່ນັບຖື.

ເລື່ອງ: ໂຈະການປຸກສ້າງ ເຮືອນຢູ່ອາໃສຂອງທ້າວ ວັນເຮືອງ ຂຸນທະວົງ ຢູ່ໜ່ວຍ 14 ບ້ານຮ່ອງຄ້າ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ.

- ອີງຕາມ: ກົດໝາຍວ່າດ້ວຍປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003, ໝວດທີ III ມາດຕາ 27 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າເມືອງ.
- ອີງຕາມ: ບົດບັນທຶກກອງປະຊຸມ ປຶກສາຫາລື ກ່ຽວກັບຂໍ້ຂັດແຍ່ງທີ່ດິນລັດ ຢູ່ບ້ານ ຮ່ອງຄ້າ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ, ຄັ້ງວັນທີ 14 / 06 / 2016.

## ເຈົ້າເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ອອກຄຳສັ່ງ:

1. ໃຫ້ທ້າວ ວັນເຮືອງ ຂຸນທະວົງ ແລະ ບຸກຄົນກ່ຽວຂ້ອງ ໂຈະການປຸກສ້າງອາຄານໃສ່ດອນດິນລັດ ຢູ່ໜ່ວຍ 14 ບ້ານຮ່ອງຄ້າ ເມືອງຈັນທະບູລີ ບໍ່ໃຫ້ມີການເຄື່ອນໄຫວໃດໆ ຈົນກວ່າຈະໄດ້ຮັບອະນຸຍາດ ແລະ ມີເອກະສານ ຢ່າງຖືກຕ້ອງຕາມລະບຽບ ກົດໝາຍ.
2. ມອບໃຫ້ກອງບັນຊາການ ທະຫານເມືອງ ສົມທົບກັບກອງບັນຊາການ ທະຫານ ນະຄອນຫຼວງວຽງຈັນ ເພື່ອຮ່ວມກັນແກ້ໄຂ ຕາມບົດບັນທຶກກອງປະຊຸມ ຄັ້ງວັນທີ 14/06/2016.
3. ມອບໃຫ້ກອງບັນຊາການ ປກສ ເມືອງ, ປກສ ເຂດII ພ້ອມຄະນະກຳມະການ ທີ່ກ່ຽວຂ້ອງ ເຂົ້າຄຸ້ມຄອງ ປ້ອງກັນພື້ນທີ່ໄວ້ ຈົນກວ່າຈະມີຄຳສັ່ງໃໝ່.
4. ຖ້າຫາກ ຫາກລະເມີດ, ຝ່າຝືນ, ບໍ່ປະຕິບັດ ຕາມຄຳສັ່ງສະບັບນີ້ ແມ່ນໃຫ້ຄະນະກຳມະການ ແລະ ພາກສ່ວນກ່ຽວຂ້ອງ ດຳເນີນຄະດີ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.
5. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າເມືອງຈັນທະບູລີ**

ບ່ອນສົ່ງ

| | | |
|---|---|---|
| - ເຈົ້າເມືອງ-ຮອງເຈົ້າເມືອງ | ທ່ານລະ | 1 ສະບັບ |
| - ພາກສ່ວນທີ່ກ່ຽວຂ້ອງ | ພາກສ່ວນລະ | 1 ສະບັບ |
| - ທ້າວ ວັນເຮືອງ ຂຸນທະວົງ | | 1 ສະບັບ |
| - ເກັບມ້ຽນສຳນາ | | 2 ສະບັບ |

ເພັດສະໄໝ ນັດຜາສຸກ

Phetsamay NATHPHASOUK